**ແຜນການສອນ**

**ບົດຮຽນໂຮງຮຽນວັນອາທິດ**

**ວັນອາທິດ ທີ 30 ພຶສພາ 2010 (05-30-2010)**

---

**<u>ຈາກມື້ນີ້ເປັນຕົ້ນໄປ:</u>**

**<u>ຂໍ້ພຣະຄັມພີໃນບົດຮຽນ</u>:** (ເພງສັຣເສີນ 51:6-10; ຍອດເພງ 2:15; ກິຈການ 18:24-26; ໂຣມ 16:3-5ກ)

**<u>ເປົ້າໝາຍຂອງບົດຮຽນ:</u>**

ບົດຮຽນນີ້ແມ່ນກ່ຽວກັບທີ່ນທາງຕ່າງ ທີ່ສາມີ-ພັລຍາ ສາມາດສ້າງພື້ນຖານເພື່ອການເຕີບໃຫຍ່ຂຶ້ນໃນສາຍສຳພັນຂອງຊີວິດແຕ່ງງານ.

**<u>ຄວາມສຳຄັນຂອງບົດຮຽນ:</u>**

ບົດຮຽນນີ້ ມີຄວາມສຳຄັນຫລາຍ ເພາະວ່າມີຄູ່ແຕ່ງງານເປັນຈຳນວນຫລາຍທີ່ມີບັນຫາ. ມີຫລາຍຄູ່ກຳກຳລັງມຸ້ງສູ່ການຢ່າຮ້າງ ຖ້າວ່າບໍ່ມີການປັ່ງນແປງ. ມີຄູ່ແຕ່ງງານຫລາຍຄູ່ທີ່ບໍ່ຢ່າຮ້າງ ແລະຍັງຢູ່ຮ່ວມກັນ ຢູ່ໃຕ້ສາຍຄາດງອກັນ ຂໍ້ຂັດແຍ້ງ, ຄວາມເມີນເສີຍ, ແລະຂາດການແບ່ງປັນຈຸດໝາຍປາຍທາງ ນີ້ເປັນພຽງ 2-3 ຢ່າງທີ່ຂາດການເປັນນໍ້ານຶ່ງໃຈດຽວກັນ ທີ່ເຮັດໃຫ້ສາມີ ແລະພັລຍາຂາດຈາກການມີປະສົບການ ໃນຄວາມເພິ່ງພໍໃຈໃນຊີວິດແຕ່ງງານ.

**<u>ຜົນສະທ້ອນຕໍ່ຊີວິດ:</u>**

ບົດຮຽນນີ້ສາມາດຊ່ວຍຜູ້ທີ່ເຖິງກະສຽນ ໃນການສ້າງພື້ນຖານ ສຳລັບການມີຄວາມເພິ່ງພໍໃຈ, ການເຕີບໃຫຍ່ຂຶ້ນໃນສາຍສັມພັນຂອງຊີວິດແຕ່ງງານ.

**<u>ການຈັດຕຽມ ແລະແຜນການສອນຂອງຄຣູ:</u>**

1. ອະທິຖານຂໍການຊົງນຳຈາກພຣະວິນຍານບໍຣິສຸດ ກ່ອນສິ່ງອື່ນໝົດ.
2. ສຶກສາຂໍ້ພຣະຄັມພີທີ່ຈະໃຊ້ໃນບົດຮຽນນີ້.
3. ຖາມລື້ມຄວາມຊົງຈຳຂອງນັກຮຽນໃນບົດຮຽນອາທິດແລ້ວນີ້.
4. ອ່ານ ແຜນການສອນ ໝາຍບ່ອນສຳຄັນ, ປັບປຸງ, ແກ້ໄຂ, ຈົດບັນທຶກ ແລະ ອື່ນໆ........
5. ແຈກຢາຍບົດຮຽນໃຫ້ນັກຮຽນທຸກຄົນ

**<u>ແນະນຳ:</u>**

- ເວລາປຸກເຮືອນນັ້ນແມ່ນສ່ວນປະກອບອັນໃດທີ່ສຳຄັນທີ່ສຸດ?
- ມີສິ່ງນຶ່ງທີ່ຈຳເປັນ ແລະສຳຄັນທີ່ສຸດຂອງການສ້າງບ້ານທີ່ເໝາະສົມ ໃນການປູພື້ນຖານໃຫ້ໝັ້ນແກ່ນ ຖ້າຫາພື້ນຖານມີບ່ອນຜິດພາດ, ທັງໝົດຈະໃຊ້ການບໍ່ໄດ້. ໃນການຈັດຕຽມການແຕ່ງງານດ້ວຍເຊັ່ນດຽວກັນ. ຖ້າພື້ນຖານການແຕ່ງງານບໍ່ຖືກຕ້ອງ ບໍ່ກໍ່ຕັ້ງຢູ່ໃນພື້ນຖານຂອງພຣະເຢຊູຄຣິດ, ຊີວິດການແຕ່ງງານຈະບໍ່ໝັ້ນຄົງ.

**1. <u>ສາຣະພາບ ແລະຖິ້ມໃຈເກົ່າເອົາໃຈໃໝ່:</u>** (ພສສ 51:6-10)

- ຂໍໃຫ້ນັກຮຽນຜູ້ນຶ່ງອາສາສມັກອ່ານ ພຣະທັມ ເພງສັຣເສີນ 51:6-10
- ກະສັດດາວິດເປັນຕົວຢ່າງທີ່ສະແດວໃຫ້ເຫັນເຖິງຂອບເຂດ ທີ່ຖືກຕ້ອງເພື່ອໃຫ້ພວກເຮົາມີຄວາມສັມພັນກັບພຣະອົງ.
- ສເນີໃຫ້ນັກຮຽນບອກເຖິງຄວາມສຳຄັນ ແລະຄວາມສາມາດຂອງພຣະເຈົ້າທີ່ໄດ້ໃຫ້ອະພັຍ ເພື່ອໃຫ້ຫົວໃຈຂອງພວກເຮົາຂາວສະອາດ. ການຍອມຮັບເໝືອນກັບວ່າເປັນການເອົາໃຈໃສ່ໃນການໃຫ້ອະພັຍທີ່ຄູ່ສົມຣົດມີຄວາມຕ້ອງການນັ້ນມີຄວາມສຳຄັນແນວໃດ?
- ໃນຖານະເປັນຄຣິສຕຽນນັ້ນ, ມັນເປັນໄປໄດ້ບໍ່ທີ່ຈະສູນເສັຽຄວາມລອດພົ້ນເພາະຍອມຈຳນົນຕໍ່ບາບ?
- ຖ້າຫາກພຣະເຈົ້າໄດ້ຊົງອະພັຍຄວາມຜິດບາບຂອງພວກເຮົາ ແລະໃຫ້ພວກເຮົາມີຄວາມສັມພັນອັນຖືກຕ້ອງກັບພຣະອົງ, ເຮັດແນວໃດພວກເຮົາຈຶ່ງຈະສາມາດໃຫ້ອະພັຍແກ່ຄູ່ສົມຣົດຂອງພວກເຮົາໄດ້?
- ພວກເຮົາຕ້ອງຍິນຍອມໃຫ້ພຣະເຈົ້າເຮັດໃຫ້ພວກຫົວໃຈຂອງພວກເຮົາສະອາດ. ແລະພວກເຮົາກໍເຊັ່ນດຽວກັນ ຕ້ອງການໃຫ້ພຣະເຈົ້ານຳທາງຊີວິດການແຕ່ງງານຂອງພວກເຮົາໃຫ້ເປັນທີ່ຖວາຍກຽດແດ່ພຣະອົງ.

**<u>ຄຳຖາມເພື່ອແລກປ່ຽນຄວາມຄິດເຫັນໃນພຣະຄັມພີ:</u>** (ພສສ 51:6-10)

1. ເປັນຫຍັງພວກເຮົາຈຶ່ງບໍ່ພິຈາຣະນາເບິ່ງການທີ່ບໍ່ມີຄວາມເຊື່ອທີ່ເປັນການບໍ່ໄດ້ຮັບການໃຫ້ອະພັຍ, ເຊັ່ນການປະຕິເສດ, ການບໍ່ທຳຕາມ, ການຕົວະ, ການເມີນເສີຍຕໍ່ການຕິດຕໍ່ພົວພັນ ຫລືສັນຍາໃນການແຕ່ງງານຂອງພວກເຮົາແລ້ວບໍ່ປະຕິບັດຕາມ?
2. ຖ້າຫາກເຂົາເຈົ້າບໍ່ມີຄວາມເຊື່ອ ຄູ່ສົມຣົດສົມຄວນໃຫ້ໂອກາດຄັ້ງທີສອງໄດ້ບໍ່?
3. ເປັນຫຍັງ ການທີ່ໃຫ້ອະພັຍຄົນອື່ນຈຶ່ງເປັນການຍາກແທ້, ຖ້າພວກເຮົາບໍ່ໃຫ້ອະພັຍຈະບໍ່ເປັນຜົນສະທ້ອນຕໍ່ຄວາມລອດພົ້ນຂອງພວກເຮົາບໍ່?
4. ເຮັດແນວໃດຈຶ່ງຈະໃຫ້ຄູ່ສົມຣົດໃໝ່ຫລີເວັ້ນຈາກການຫລັ່ງນ້ຳຕາໃນຊີວິດສົມຣົດຂອງເຂົາເຈົ້າໄດ້?

**2. <u>ຈົ່ງຈັບພວກໝາຈອກນ້ອຍ:</u>** (ຍອດເພງ 2:15)

- ໃຫ້ນັກຮຽນຜູ້ນຶ່ງອາສາສມັກອ່ານ ພຣະທັມ ຍອດເພງ 2:15
- ສົນທະນາເຣື່ອງ ຕິດທຸຣະການງານຫລາຍເຮັດໃຫ້ຊີວິດແຕ່ງງານເຈັບປວດໄດ້.
- ໃນຄວາມກົດດັນຂອງວຽກງານ, ການເງິນ, ແລະຂໍ້ຜູກມັດຕ່າງໆໃນຄອບຄົວ, ແລະໝາຈອກນ້ອຍໄດ້ພາກັນແລ່ນເຂົ້າມາສ້າງຄວາມຮຸນແຮງແຜງຣິດຢູ່ໃນຊີວິດສົມຣົດຂອງພວກເຮົາ.
- ແມ່ນຫຍັງທີ່ເພີ້ມຄວາມກົດດັນໃນຊີວິດສົມຣົດຂອງທ່ານ?

**<u>ຄຳຖາມເພື່ອແລກປ່ຽນຄວາມຄິດເຫັນໃນພຣະຄັມພີ:</u>** (ຍອດເພງ 2:15)

1. ສວນອະງຸ່ນ ແລະໝາຈອກນ້ອຍໝາຍເຖິງຫຍັງ?
2. ຊາໂລໂມນກຳລັງສອນເຣື່ອງຫຍັງແກ່ຜູ້ທີ່ອ່ານ?
3. ໃນໂລກທີ່ພວກເຮົາຢູ່ນີ້, ໝາຈອກນ້ອຍໄດ້ທຳຮ້າຍຊີວິດສົມຣົດຂອງພວກເຮົານັ້ນແມ່ນຫຍັງ?
4. ພວກເຮົາຈະສາມາດປ້ອງກັນໝາຈອກນ້ອຍບໍ່ໃຫ້ມັນທຳລາຍພື້ນຖານການແຕ່ງງານຂອງພວກເຮົາໄດ້ແນວໃດ?

3 . **<u>ຕິດພັນຝ່າຍວິນຍານ:</u>** (ກິຈການ 18:24-26; ໂຣມ 16:3-5ກ)

- ໃຫ້ນັກຮຽນຜູ້ນຶ່ງອາສາສມັກອ່ານ ພຣະທັມ ກິຈການ 18:24-26; ແລະໃຫ້ອີກຜູ້ນຶ່ງອ່ານ ໂຣມ 16:3-5ກ
- ຕົວຢ່າງການຊ່ອຍເຫລືອຮ່ວມກັນຂອງອາກີລາ ແລະປີຊະກີລາທີ່ເປັນການຢັ້ງຢືນໃນການຮັບໃຊ້. ພ້ອມໃຈກັນ ຈະເຮັດໃຫ້ຊີວິດສົມຣົດຂອງທ່ານເຂັ້ມແຂງຂຶ້ນ.
- ໃນທາງໃດແດ່ທີ່ທ່ານໄດ້ພຍາຍາມເຮັດ ເພື່ອໃຫ້ຈະເຣີນເຕີບໂຕຂຶ້ນທາງຝ່າຍຈິດວິນຍານພ້ອມກັນກັບຄູ່ສົມຣົດຂອງທ່ານ?
- ອາກີລາ ແລະປີຊະກີລາໄດ້ ອະທິບາຍ ຫົນທາງທີ່ພຣະເຈົ້າປະທານໃຫ້ລາວ
- ກາຣີ ສມໍລີ ເປັນປຶ້ມສັນຍາການແຕ່ງງານ (ແສງສວ່າງຂ່າວປະເສີດທົ່ວໄປ; ຊຶ່ງຈິດຈໍ່ໃສ່ຄອບຄົວ) ທີ່ໃຫ້ຝຶກຝົນແລະເປັນຫົນທາງທີ່ເອົາມາໃຊ້ ໃນຊີວິດແຕ່ງງານ. ຊຶ່ງມີຢູ່ 5 ຊ່ອງທາງທີ່ພວກເຮົາສາມາດເປີດປະຕູແຫ່ງຈິດວິນຍານຄື: ການເວົ້າຈາ, ການສຶກສາພຣະຄັມພີ, ຮັບໃຊ້ພຣະເຈົ້າ, ແລະມີຄວາມໄຝ່ຝັນ.

**<u>ຄຳຖາມເພື່ອແລກປ່ຽນຄວາມຄິດເຫັນໃນພຣະຄັມພີ:</u>** ກິຈການ18:24-26; ໂຣມ 16:3-5ກ

1. ເປັນດ້ວຍເຫດໃດຈຶ່ງມີຫລາຍຄູ່ສາມີ-ພັລຍາໄດ້ພາກັນມອງຂ້າມ ໃນການເຮັດໃຫ້ຈິດວິນຍານເຂົ້າໃກ້ຊິດ ສນິດສນົມເປັນສິດທິພິເສດໃນຊີວິດສົມຣົດຂອງເຂົາເຈົ້າ?
2. ເປັນຫຍັງຈຶ່ງວ່າ ຕ່າງຝ່າຍຕ່າງຮັບໃຊ້ກັນຂອງປີຊະກີລາ ແລະອາກີລາຈຶ່ງມີຄວາມສຳຄັນ?
3. ການຮັບໃຊ້ຮ່ວມກັນ ເປັນການເສີມສ້າງຊີວິດການສົມຣົດມີປະສິດທິພາບດີຂຶ້ນຢ່າງໃດ?
4. ການຮັບໃຊ້ຮ່ວມກັນເປັນການຊ່ອຍໃຫ້ຄູ່ສົມຣົດຈະເຣີນຂຶ້ນທາງດ້ານຈິດວິນຍານຢ່າງໃດ?
5. ແມ່ນຫຍັງທີ່ເປັນຕົວຢ່າງຂອງການຮັບໃຊ້ທີ່ສາມາດເປັນຂໍ້ເຊື່ອມຕໍ່ເຂົ້າກັນຂອງຄູ່ສົມຣົດ?

**<u>ພຣະຄັມພີແຫ່ງຄວາມຈິງ</u>**

- ໃນເມື່ອຄວາມເຈັບປວດລອດລ້າວເຂົ້າມາສູ່ຊີວິດການແຕ່ງງານ ເພາະຄວາມບາບຂອງຄູ່ສົມຣົດ, ຄຣິສຕຽນຄວນຈະຕຶກລຶງເອົາຄວາມຈຳເປັນໃນຂັ້ນຕອນອັນໃດ ແລະຈະໃຫ້ອະພັຍຊຶ່ງສາມາດເຮັດໃຫ້ຄວາມສຳພັນກັບຄືນມາ?
- ສະແດງເຖິງຈຸດຄວາມເຈັບປວດຂອງການສົມຣົດຂອງເຂົາເຈົ້າກ່ອນທີ່ເຂົາເຈົ້າຈະມີແຜເຂົ້າມາສູ່ບາດແຜ ຊຶ່ງຈະນຳມາສູ່ຄວາມພິນາດຄວາມສັມພັນຊຶ່ງກັນແລະກັນນັ້ນເຂົາເຈົ້າຕ້ອງຊ່ອຍກັບແກ້ໄຂດ້ວຍສະຕິປັນຍາ.
- ໃນເມື່ອເຂົາເຈົ້າເອົາຕົວເຂົາເຈົ້າເຂົ້າມາຮັບໃຊ້ອົງພຣະຜູ້ເປັນເຈົ້າຮ່ວມກັນ, ເຂົາເຈົ້າຈະເລີ້ມມີຄວາມພາກພູມໃຈໃນລັກສະນະການອວຍພຣະພອນທີ່ເຂົ້າມາໃນຊີວິດສົມຣົດ ເຂົາເຈົ້າຈະສ້າງພື້ນຖານດ້ານຈິດວິນຍານທີ່ເຂັ້ມແຂງມາດຕະຖານເປັນຢ່າງດີ.

**ອຸປຖັມໂດຍ ລາວຊາວເທີນບັບຕິສສັມພັນ www.lsbf.org by JH**